# ການລ້ຽງງົວແມ່ຜະລິດລູກ



## ລ້ຽງງົວໃຫ້ມີຜົນກຳໄລດີ ຕ້ອງໄດ້ເອົາໃຈໃສ່ຫຍັງແດ່?

- ການລ້ຽງງົວແມ່ພັນໃຫ້ມີສຸຂະພາບແຂງແຮງດີ ແມ່ນເປັນປັດໄຈສຳຄັນຕໍ່ການກັບຄືນຂຶ້ນເພດ ແລະ ການປະສົມພັນຕິດ ເຮັດໃຫ້ງົວແມ່ພັນສາມາດໃຫ້ລູກໄດ້ຢ່າງສະໝ່ຳສະເໝີປີລະໂຕ.
- ການເບິ່ງແຍງຮັກສາງົວນ້ອຍເກີດໃໝ່ຫາຢ່ານົມ ໃຫ້ມີການຈະເລີນເຕີບໂຕດີ, ແຂງແຮງ ແລະ ບໍ່ຕາຍ ແມ່ນເປັນປັດໄຈສຳຄັນໃນການເພີ່ມຂຶ້ນຂອງຝູງງົວໃນແຕ່ລະປີ.

ສະນັ້ນ, ຜູ້ລ້ຽງງົວແມ່ຜະລິດລູກ ຄວນຮັບຮູ້ ແລະ ເອົາໃຈໃສ່ບາງບັນຫາທີ່ສຳຄັນ ດັ່ງລຸ່ມນີ້:

### 1 ການປະສົມພັນ ແລະ ການຖືພາ:

- ງົວແມ່ພັນ ທີ່ຈະປະສົມພັນຕິດ ຫຼື ຖືພາ ຕ້ອງແມ່ນຢູ່ໃນໄລຍະຂອງການຂຶ້ນເພດ ແລະ ພ້ອມໃຫ້ປະສົມພັນ.
- ຖ້າງົວແມ່ບໍ່ໄດ້ຮັບການປະສົມພັນ ຫຼື ປະສົມພັນບໍ່ຕິດ ຈະກັບຄືນຂຶ້ນເພດອີກ ສະເລ່ຍ 21 ວັນ (18 ຫາ 24 ວັນ).
- ຖ້າປະສົມພັນຕິດ ງົວແມ່ຈະໃຊ້ເວລາຖືພາ ສະເລ່ຍ 282 ວັນ (274 - 291 ວັນ).
- ສຳລັບ ການລ້ຽງງົວແມ່ຖືພາໃນໄລຍະ 3 ເດືອນທຳອິດ ແມ່ນຈະໄດ້ເວົ້າຢູ່ໃນຂໍ້ທີ ⑤.

| | ໄລຍະກ່ອນການຂຶ້ນເພດ (Proestrus) | | ໄລຍະຂຶ້ນເພດ (Estrus) | | ໄລຍະຫຼັງການຂຶ້ນເພດ (Metestrus) | |
|---|---|---|---|---|---|---|
| | 6 – 12 ຊົ່ວໂມງ | | 18 ຊົ່ວໂມງ | | 10 ຊົ່ວໂມງ | |
| |  | |  | |  | |
| 0 | 6 | 12 | 18 | 24 | 28 | 36 |
| ໄລຍະເວລາປະສົມພັນ | ໄວເກີນໄປ | ປະສົມໄດ້ | ເວລາທີ່ເໝາະສົມ | | ປະສົມໄດ້ | ຊ້າເກີນໄປ |

**2 ການລ້ຽງງົວແມ່ຖືພາ 4 ຫາ 6 ເດືອນ:** ເປັນໄລຍະທີ່ລູກນ້ອຍມີການຈະເລີນເຕີບແລ້ວ ແລະ ກຽມຢ່ານົມ, ຖ້າຫາກງົວນ້ອຍກິນຫຍ້າ ແລະ ອາຫານໄດ້ຫຼາຍຂຶ້ນແລ້ວ ງົວແມ່ກໍຕ້ອງການອາຫານເພື່ອນຳໃຊ້ບຳລຸງລ້ຽງຮ່າງກາຍເທົ່ານັ້ນ (ບໍ່ຜະລິດນ້ຳນົມ), ລູກທີ່ຢູ່ໃນທ້ອງກໍຍັງນ້ອຍ ງົວແມ່ຈຶ່ງຕ້ອງການອາຫານໜ້ອຍກວ່າໄລຍະອື່ນໆ ແລະ ອາດໃຊ້ອາຫານທີ່ມີຄຸນະພາບຕ່ຳແດ່ກໍໄດ້ ເພື່ອເປັນການປະຢັດລາຍຈ່າຍລົງ ແຕ່ກໍບໍ່ຄວນໃຫ້ງົວແມ່ພັນຈ່ອຍຜອມຫຼາຍຈົນເກີນໄປ.

**3 ການລ້ຽງງົວແມ່ຖືພາ 7 ເດືອນ ຫາ ເກີດລູກ:** ເປັນໄລຍະສຳຄັນທີ່ຈະຕ້ອງໄດ້ເອົາໃຈໃສ່ ເພາະເປັນໄລຍະທີ່ລູກອ່ອນຢູ່ໃນທ້ອງມີການຈະເລີນເຕີບໂຕ ປະມານ 70 ຫາ 80% ແລະ ເປັນໄລຍະທີ່ງົວແມ່ພັນກຽມຜະລິດນ້ຳນົມລ້ຽງລູກນ້ອຍ.

- ຄວນແຍກງົວແມ່ພັນລ້ຽງຕ່າງຫາກ ແລະ ໃຫ້ອາຫານທີ່ມີຄຸນະພາບດີ ຫຼື ຕ້ອງໄດ້ເສີມອາຫານເຂັ້ມຂຸ້ນຫຼາຍຂຶ້ນ ເພື່ອຊົດເຊີຍຈຳນວນອາຫານທີ່ງົວແມ່ກິນໄດ້ໜ້ອຍລົງ ພະຍາຍາມເຮັດໃຫ້ງົວແມ່ມີນ້ຳໜັກເພີ່ມຂຶ້ນ ເພື່ອຊົດເຊີຍນ້ຳໜັກທີ່ຈະສູນເສຍໄປຫຼັງຈາກເກີດລູກ ໂດຍສະເພາະແມ່ນງົວແມ່ສາວແມ່ນເປັນສິ່ງທີ່ຈຳເປັນຫຼາຍທີ່ສຸດ.
- ຖ້າໃຫ້ອາຫານພະລັງງານບໍ່ພຽງພໍຈະເຮັດໃຫ້ອັດຕາການປະສົມຕິດຕ່ຳ, ງົວນ້ອຍເກີດໃໝ່ ແລະ ຢ່ານົມ ມີນ້ຳໜັກຕ່ຳ ແລະ ມີອັດຕາການຕາຍສູງ.
- ໃຫ້ວິຕາມິນ A, D, E, K ແກ່ງົວແມ່ຖືພາໂດຍວິທີການສັກ ຫຼື ປະສົມອາຫານໃຫ້ກິນ ແລະ ມີກ້ອນແຮ່ທາດຫ້ອຍປະໄວ້ໃນຄອກໃຫ້ງົວແມ່ໄດ້ເລຍກິນຕາມໃຈ ຈະເຮັດໃຫ້ງົວແມ່ຟື້ນໂຕຫຼັງເກີດລູກໄດ້ໄວຂຶ້ນ.

**4 ການເບິ່ງແຍງງົວແມ່ແລະ ງົວນ້ອຍ ໄລຍະເກີດລູກ:** ກ່ອນເກີດລູກ 1 ອາທິດ ຄວນແຍກງົວແມ່ໃຫ້ຢູ່ຄອກຕ່າງຫາກທີ່ມີຄວາມສະອາດ ຫຼື ລ້ຽງຢູ່ໃນທົ່ງຫຍ້າທີ່ສະອາດ, ບໍ່ປຽກຊຸ່ມ ແລະ ສາມາດເບິ່ງແຍງງ່າຍ, ກະກຽມອາຫານ ແລະ ນ້ຳໃຫ້ງົວແມ່ໄດ້ກິນຢ່າງພຽງພໍ. ຖ້າກາຍກຳນົດເກີດລູກຮອດ 10 ວັນ ຕ້ອງສັງເກດ ແລະ ເບິ່ງແຍງຢ່າງໃກ້ຊິດ ແລະ ເວລາງົວແມ່ເກີດລູກ ຜູ້ລ້ຽງຕ້ອງເອົາໃຈໃສ່ຕິດຕາມເບິ່ງແຍງ ດັ່ງນີ້:

- ຖ້າງົວນ້ອຍເກີດອອກມາໃນທ່າປົກກະຕິ ແມ່ນບໍ່ຈຳເປັນຊ່ວຍຫຍັງ, ຄວນຢືນຢູ່ຫ່າງໄກເພື່ອບໍ່ໃຫ້ລົບກວນ, ເຊິ່ງຈະເກີດອອກມາພາຍຫຼັງເຫັນຜົກນ້ຳແຕກ 1 ຫາ 2 ຊົ່ວໂມງ.
- ຖ້າງົວນ້ອຍອອກມາໃນທ່າຜິດປົກກະຕິ ຫຼື ເກີນ 2 ຊົ່ວໂມງ ຫຼັງຈາກຜົກນ້ຳແຕກ ຄວນໄດ້ມີການຊ່ວຍເຫຼືອ. ຖ້າບໍ່ດັ່ງນັ້ນ ພາຍໃນ 4 ຊົ່ວໂມງ ງົວນ້ອຍຈະຕາຍ.
- ງົວນ້ອຍເກີດອອກມາໃໝ່ ຕ້ອງໃຫ້ຄວາມຊ່ວຍເຫຼືອທັນທີໂດຍການເຊັດໂຕໃຫ້ແຫ້ງ, ເອົານ້ຳເມືອກອອກຈາກປາກ, ດັງ, ມັດສາຍບືຫ່າງຈາກພື້ນທ້ອງ 4 ຫາ 6 ຊັງຕີແມັດ, ຕັດສາຍບື ແລະ ທາດ້ວຍຢາທິງເຈີໄອໂອດີນ (ຢາເຫຼືອງ).
- ໃຫ້ງົວນ້ອຍໄດ້ກິນນ້ຳນົມເຫຼືອງຈາກແມ່ ພາຍໃນ 4 ຫາ 8 ຊົ່ວໂມງ ຫຼື ບໍ່ເກີນ 24 ຊົ່ວໂມງ ຫຼັງຈາກເກີດ ເພາະນ້ຳນົມເຫຼືອງຈະມີຄຸນຄ່າທາງດ້ານອາຫານສູງ ແລະ ທີ່ສຳຄັນແມ່ນມີພູມຄຸ້ມກັນພະຍາດຕ່າງໆສາມາດຖ່າຍທອດຈາກແມ່ໃຫ້ລູກໄດ້. ຖ້າຫາກງົວນ້ອຍບໍ່ໄດ້ກິນນ້ຳນົມເຫຼືອງ ພາຍໃນກຳນົດເວລາທີ່ກ່າວມານັ້ນ ຈະເຮັດໃຫ້ງົວນ້ອຍອ່ອນແອ, ເຈັບປ່ວຍໄດ້ງ່າຍ ແລະ ສຸດທ້າຍແລ້ວເຖິງແມ່ນວ່າຜູ້ລ້ຽງຈະເອົາໃຈໃສ່ເບິ່ງແຍງດີປານໃດກໍຕາມ ງົວນ້ອຍກໍຈະຕາຍໃນທີ່ສຸດ.

**5 ການລ້ຽງງົວແມ່ຫຼັງເກີດລູກ ຈົນເຖິງໄລຍະຖືພາໃໝ່ 3 ເດືອນ:** ເປັນໄລຍະທີ່ງົວແມ່ພັນມີຄວາມຕ້ອງການອາຫານທີ່ມີຄຸນນະພາບດີທີ່ສຸດ ເພື່ອໃຊ້ຟື້ນຟູລະບົບອະໄວຍະວະສືບພັນ ແລະ ຜະລິດນ້ຳນົມລ້ຽງລູກນ້ອຍ. ສະນັ້ນ, ການລ້ຽງງົວແມ່ພັນໃນໄລຍະນີ້ແມ່ນການຈັດການເບິ່ງແຍງເຮັດໃຫ້ງົວແມ່ພັນມີສຸຂະພາບສົມບູນແຂງແຮງດີ ແລະ ມີນ້ຳໜັກເພີ່ມຂຶ້ນ ຈະເຮັດໃຫ້ງົວແມ່ກັບຄືນມາຂຶ້ນເພດໄວ, ການປະສົມພັນຕິດກໍຈະດີຂຶ້ນ ແລະ ສາມາດຫຼຸດໄລຍະຫ່າງຂອງການໃຫ້ລູກລົງໄດ້. ການຈັດການເບິ່ງແຍງງົວແມ່ ແລະ ງົວນ້ອຍ ໃນແຕ່ລະມື້ຄວນປະຕິບັດດັ່ງນີ້:



- ງົວແມ່ ແລະ ງົວນ້ອຍເກີດໃໝ່ ຄວນແຍກລ້ຽງໃນຄອກຕ່າງຫາກ ທີ່ແຫ້ງ, ສະອາດ ແລະ ອົບອຸ່ນດີ.
- ໃຫ້ງົວແມ່ໄດ້ກິນຫຍ້າອ່ອນຢ່າງເຕັມທີ່ ປະມານ 10 ຫາ 15 ເປີເຊັນ ຂອງນ້ຳໜັກໂຕ.
- ໃຫ້ອາຫານເຂັ້ມຂຸ້ນ ຫຼື ອາຫານປະສົມ ທີ່ມີທາດຊີ້ນລວມ 15 ຫາ 16 ເປີເຊັນ ເປັນອາຫານເສີມ 1 ຫາ 2 ກິໂລຕໍ່ມື້ ຫຼື ອີງຕາມສະພາບຂອງງົວແມ່.
- ສັກຢາວິຕາມິນ A, D, E, K ໃຫ້ງົວແມ່ຫຼັງຈາກເກີດລູກ.
- ມີກ້ອນແຮ່ທາດຫ້ອຍປະໄວ້ໃນຄອກໃຫ້ງົວແມ່ໄດ້ເລຍກິນຕາມໃຈ.
- ສຳລັບ ງົວນ້ອຍອາຍຸ 1 ເດືອນເຄິ່ງ ຄວນຝຶກໃຫ້ກິນອາຫານໝູນ້ອຍດູດນົມມື້ລະໜ້ອຍ ຈະຊ່ວຍເຮັດໃຫ້ກະເພາະໝັກຂອງງົວນ້ອຍມີການພັດທະນາໄວຂຶ້ນ ແລະ ງົວນ້ອຍຈະໃຫຍ່ໄວ, ເຊິ່ງຈະສາມາດຢ່ານົມໄດ້ ເມື່ອອາຍຸ 5 ເດືອນ. ແຕ່ຖ້າງົວນ້ອຍຍັງບໍ່ແຂງແຮງກໍຕ້ອງໄດ້ແກ່ຍາວເວລາອອກໄປ 6 ຫາ 8 ເດືອນ.

**ສະໜັບສະໜູນ ໂດຍ:** RATES, AFACI **ຮ່ວມຈັດຕັ້ງປະຕິບັດ ໂດຍ:** NAFRI, DAEC, Livestock Research Center, BPL FARM

ສອບຖາມຂໍ້ມູນເພີ່ມຕື່ມ ໂທ:
- 020 5622 8202 (ທ. ພູຄຳ ວຽງວິໄລ)
- 020 2228 8863 (ປອ. ນ. ພອນວິໄລ ສິນະວົງ)